# LAO PEOPLE' S DEMOCRATIC REPUBLIC

Peace, Independence, Democracy, Unity, Prosperity

**Deputy Prime Minister,**
**Minister for Foreign Affairs**

---

## INSTRUMENT OF ACCEPTANCE

**The Protocol to Amend the ASEAN Comprehensive Investment Agreement**

**WHEREAS** the Protocol to Amend the ASEAN Comprehensive Investment Agreement was signed by the duly authorized representative of the Government of the Lao People's Democratic Republic, at Naypyidaw, the Republic of the Union of Myanmar, on 25 August 2014;

**AND WHEREAS** Article 6, Paragraph 1, of the Protocol stipulates that, this Protocol shall enter into force after all Member States have notified the completion of their internal procedures for the entry into force of this Protocol to, or, where necessary, deposited instrument of ratification or acceptance with, the Secretary-General of ASEAN.

**NOW THEREFORE** I, Thongloun SISOULITH, Deputy Prime Minister, Minister of Foreign Affairs, declare that the Government of the Lao People's Democratic Republic, having considered the said Protocol, accepts the same and undertakes to faithfully perform and carry out the provisions therein contained.

**IN WITNESS WHEREOF**, I have signed, and sealed this Instrument of Acceptance at Vientiane, the Lao People's Democratic Republic, on 30 March 2015.

THE ASEAN SECRETARIAT
RECEIVED 09 FAX/MAIL 2
DATE 5/6/15 TIME 15.00

Thongloun SISOULITH

(ບົດແປ)

# ສານຮັບຮອງ

**ອານຸສັນຍາວ່າດ້ວຍການດັດແກ້ສັນຍາການລົງທຶນຮອບດ້ານອາຊຽນ**

ໃນເມື່ອ ອານຸສັນຍາວ່າດ້ວຍການດັດແກ້ສັນຍາການລົງທຶນຮອບດ້ານອາຊຽນ, ໄດ້ຖືກລົງນາມໂດຍຜູ້ຕາງໜ້າລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ທີ່ ເນປີດໍ, ສະຫະພາບ ມຽນມາ, ໃນວັນທີ 25 ສິງຫາ 2014;

**ແລະ** ໃນເມື່ອ ມາດຕາ 6, ວັກ 1, ຂອງອານຸສັນຍາດັ່ງກ່າວ ໄດ້ລະບຸໄວ້ວ່າ ອານຸສັນຍາສະບັບນີ້ຈະມີຜົນບັງຄັບໃຊ້ຫຼັງຈາກບັນດາປະເທດສະມາຊິກທັງໝົດໄດ້ແຈ້ງຜົນສໍາເລັດຂອງຂັ້ນຕອນພາຍໃນສໍາລັບການມີຜົນບັງຄັບໃຊ້ອານຸສັນຍາສະບັບນີ້ ຫຼື ໄດ້ສົ່ງມອບສານສັດຕະຍາບັນ ຫຼື ສານຮັບຮອງໃຫ້ເລຂາທິການໃຫຍ່ອາຊຽນ.

**ສະນັ້ນ,** ຂ້າພະເຈົ້າ ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ, ຈຶ່ງປະກາດວ່າ ຫລັງຈາກທີ່ໄດ້ພິຈາລະນາອານຸສັນຍາສະບັບດັ່ງກ່າວນີ້ແລ້ວ, ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ໃຫ້ການຮັບຮອງ ແລະ ຮັບປະກັນວ່າຈະປະຕິບັດຢ່າງເຄັ່ງຄັດຕາມພັນທະ ແລະ ຂໍ້ກໍານົດທີ່ບັນຈຸຢູ່ໃນອານຸສັນຍາສະບັບນີ້ໃຫ້ບັນລຸຜົນສໍາເລັດ.

**ເພື່ອເປັນຫລັກຖານ,** ຂ້າພະເຈົ້າຈຶ່ງໄດ້ລົງນາມ ແລະ ປະທັບຕາໃນສານຮັບຮອງສະບັບນີ້, ທີ່ນະຄອນຫຼວງວຽງຈັນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ໃນວັນທີ 30 ມີນາ 2015.

(ລົງນາມ)
ທອງລຸນ ສີສຸລິດ